ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 177 /ລບ

ນະຄອນຫລວງວຽງຈັນ, ວັນທີ 07.05.2018

# ດຳລັດ

## ວ່າດ້ວຍການປະສານງານລະຫວ່າງບັນດາກະຊວງ ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ກັບສຳນັກງານນາຍົກລັດຖະມົນຕີ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມໜັງສືສະເໜີ ສະບັບເລກທີ 79/ພນ, ລົງວັນທີ 19 ມີນາ 2018 ຂອງກະຊວງພາຍໃນ.

## ລັດຖະບານ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ເນື້ອໃນການປະສານງານລະຫວ່າງກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ກັບສຳນັກງານນາຍົກລັດຖະມົນຕີ ແນໃສ່ຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງແຕ່ລະອົງການຈັດຕັ້ງ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງ ແລະ ກົມກຽວກັນ.

**ມາດຕາ 2 ປະສານງານ**

ການປະສານງານ ແມ່ນຮູບການ, ວິທີການ ຫຼື ຂະບວນການພົວພັນ, ການຮ່ວມມືກັນຂອງສອງ ຫຼື ຫຼາຍອົງການຈັດຕັ້ງ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງແຕ່ລະອົງການ ຕາມກົດໝາຍ ແລະ ລະບຽບການ ກຳນົດໄວ້ຢ່າງຖືກຕ້ອງ, ຄົບຖ້ວນ ສາມາດບັນລຸຈຸດປະສົງ, ຄາດໝາຍເພື່ອສ້າງຜົນປະໂຫຍດສູງສຸດໃຫ້ແກ່ສ່ວນລວມ.

**ມາດຕາ 3 ອະທິບາຍຄຳສັບ**

1. ອົງການລັດທຽບເທົ່າກະຊວງ ໝາຍເຖິງ ອົງການລັດບໍລິຫານ ທີ່ຂຶ້ນກັບກົງຈັກຂອງລັດຖະບານ ຕາມການຮັບຮອງຂອງສະພາແຫ່ງຊາດ ຊຶ່ງມີຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ອົງການກວດກາລັດຖະບານ ແລະ ທະນາຄານ ແຫ່ງ ສປປ ລາວ;
2. ຫົວໜ້າອົງການລັດທຽບເທົ່າກະຊວງ ໝາຍເຖິງ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ປະທານອົງການກວດກາລັດຖະບານ ແລະ ຜູ້ວ່າການທະນາຄານແຫ່ງ ສປປ ລາວ.

ມາດຕາ 4 ນະໂຍບາຍຂອງລັດ

ລັດຖະບານ ມີນະໂຍບາຍໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ສໍານັກງານນາຍົກລັດຖະມົນຕີ ມີການປະສານງານຢ່າງກົມກຽວ ແລະ ໄປທິດທາງດຽວກັນ; ຮັບປະກັນໃຫ້ວຽກງານມີປະສິດທິພາບ, ມີປະສິດທິຜົນ; ຫຼີກເວັ້ນການກ້າວກ່າຍ, ຊໍ້າຊ້ອນວຽກງານເຊິ່ງກັນ ແລະ ກັນ ຫຼື ປ່ອຍປະລະເລີຍວຽກງານເອື່ອຍອີງ ຫຼື ຖິ້ມຄວາມຮັບຜິດຊອບໃສ່ກັນ ໂດຍບໍ່ມີອົງການໃດຮັບຜິດຊອບ.

ມາດຕາ 5 ຫຼັກການການປະສານງານ

ການປະສານງານ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ສໍານັກງານນາຍົກລັດຖະມົນຕີ ປະຕິບັດຕາມຫຼັກການດັ່ງນີ້:

1. ຮັບປະກັນໃຫ້ຖືກຕ້ອງກັບກົດໝາຍ, ລະບຽບການ ແລະ ສອດຄ່ອງກັບນະໂຍບາຍຂອງລັດ;
2. ຮັບປະກັນການສົມທົບ ກ່ຽວກັບກົນໄກການຄຸ້ມຄອງລວມສູນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຍົກສູງຄວາມເປັນເຈົ້າການ, ຄວາມຮັບຜິດຊອບ ແລະ ທັດສະນະຄິດປະດິດສ້າງຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ແລະ ສໍານັກງານນາຍົກລັດຖະມົນຕີ;
4. ເຄົາລົບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຂົງເຂດວຽກງານ ຂອງແຕ່ລະອົງການຈັດຕັ້ງດ້ວຍກັນ; ຫຼຸດຜ່ອນຫຼາຍຂັ້ນ, ຫຼາຍຂອດ ໃນການປະສານງານ; ຮັບປະກັນຄວາມໂປ່ງໃສ ແລະ ວ່ອງໄວຂຶ້ນ;
5. ປະຕິບັດຕາມການຕົກລົງ ຂອງລັດຖະບານ ແລະ ການຊີ້ນໍາ ຂອງນາຍົກລັດຖະມົນຕີ;
6. ການພົວພັນຊຶ່ງກັນ ແລະ ກັນ ລະຫວ່າງທຸກອົງການຈັດຕັ້ງ ຕ້ອງແມ່ນຜູ້ມີອໍານາດສູງສຸດ ຫຼື ຜູ້ທີ່ໄດ້ຮັບການມອບໝາຍເປັນລາຍລັກອັກສອນ ເປັນຜູ້ເຊັນອະນຸມັດເອກະສານຢ່າງເປັນທາງການ.

ມາດຕາ 6 ຂອບເຂດການນໍາໃຊ້

ດໍາລັດສະບັບນີ້ນໍາໃຊ້ສະເພາະບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ສໍານັກງານນາຍົກລັດຖະມົນຕີ.

## ໝວດທີ 2
## ການປະສານງານ

ມາດຕາ 7 ວຽກທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ແກ້ໄຂເອງຢ່າງເປັນເຈົ້າການ

ວຽກທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ແກ້ໄຂເອງຢ່າງເປັນເຈົ້າການ ມີດັ່ງນີ້:

1. ວຽກທີ່ກໍານົດໄວ້ໃນກົດໝາຍ ຫຼື ນິຕິກໍາອື່ນ ທີ່ເປັນຄວາມຮັບຜິດຊອບສະເພາະຂອງກະຊວງ;
2. ວຽກທີ່ນອນໃນແຜນການລວມຂອງລັດຖະບານ ທີ່ເປັນຂອງຂະແໜງການຕົນຮັບຜິດຊອບ ແລະ ບໍ່ກ່ຽວກັບກະຊວງອື່ນ;
3. ວຽກທີ່ນອນໃນແຜນການຂອງກະຊວງ ທີ່ລັດຖະບານ ໄດ້ຮັບຮອງເອົາແລ້ວ;
4. ວຽກທີ່ລັດຖະບານໄດ້ຕົກລົງ ມອບໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ແລ້ວ;
5. ວຽກທີ່ໄດ້ຮັບການຊີ້ນໍາ, ຄໍາສັ່ງ ຫຼື ມອບໝາຍສະເພາະ ຂອງນາຍົກລັດຖະມົນຕີ.

ມາດຕາ 8 ວຽກທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງປະສານງານກັນ

ວຽກທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງປະສານງານກັນກ່ອນ, ເອກະພາບກັນແລ້ວ ຈຶ່ງແກ້ໄຂ ມີດັ່ງນີ້:

1. ວຽກທີ່ກົດໝາຍ ຫຼື ນິຕິກໍາອື່ນ ໄດ້ກໍານົດເປັນຄວາມຮັບຜິດຊອບຮ່ວມກັນ ຫຼື ກໍານົດໃຫ້ປະສານງານ;
2. ວຽກທີ່ນອນໃນແຜນການ ຫຼື ມີການຕົກລົງແລ້ວ ຈາກລັດຖະບານ ຫຼື ນາຍົກລັດຖະມົນຕີ ແຕ່ຫາກກ່ຽວຂ້ອງກັບກະຊວງອື່ນ;

3. ວຽກດຽວກັນ ແຕ່ຄຸ້ມຄອງຕາມພາລະບົດບາດ;
4. ວຽກທີ່ນິຕິກຳ ກຳນົດບໍ່ທັນຈະແຈ້ງ ຫຼື ມີການຊໍ້າຊ້ອນກັນ;
5. ວຽກທີ່ນາຍົກລັດຖະມົນຕີ ໄດ້ຊີ້ນຳ, ມີຄຳສັ່ງ ຫຼື ມອບໝາຍໃຫ້ສະເພາະ.

**ມາດຕາ 9 ວຽກທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງສະເໜີຂໍຄຳເຫັນຊີ້ນຳ ຂອງລັດຖະບານ ຫຼື ນາຍົກລັດຖະມົນຕີ ພິຈາລະນາຕົກລົງ**

ວຽກທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງສະເໜີຂໍຄຳເຫັນຊີ້ນຳຂອງລັດຖະບານ ຫຼື ນາຍົກລັດຖະມົນຕີ ພິຈາລະນາຕົກລົງ ໂດຍຜ່ານຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີດັ່ງນີ້:

1. ທຸກວຽກງານທີ່ພົວພັນກັບໜ້າທີ່, ຂອບເຂດສິດ ຂອງລັດຖະບານ ແລະ ນາຍົກລັດຖະມົນຕີ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
2. ວຽກທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ໄດ້ປະສານງານ ແລະ ປຶກສາຫາລືກັນແລ້ວ ແຕ່ຍັງບໍ່ເອກະພາບກັນເພື່ອແກ້ໄຂ;
3. ແຜນງານ, ແຜນການ, ໂຄງການ ແລະ ການຊ່ວຍເຫຼືອທາງການ ເພື່ອການພັດທະນາ (ODA) ຕາມການສະເໜີຂອງກະຊວງ, ອົງການລັດທຽບເທົ່າກະຊວງ;
4. ການສ້າງຕັ້ງ, ແຍກ, ໂຮມ, ຍຸບເລີກກະຊວງ, ອົງການລັດທຽບເທົ່າກະຊວງ, ທະບວງ;
5. ແຜນຍຸດທະສາດ, ແຜນພັດທະນາເສດຖະກິດສັງຄົມ ແຫ່ງຊາດ;
6. ແຜນງົບປະມານແຫ່ງລັດ ປະຈຳປີ ແລະ ແຜນດັດແກ້ງົບປະມານ ແຫ່ງລັດ;
7. ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງດຳລັດ ແລະ ນິຕິກຳອື່ນ ທີ່ຈຳເປັນ;
8. ບົດລາຍງານ ທີ່ຈະລາຍງານຕໍ່ສະພາແຫ່ງຊາດ ຫຼື ຕໍ່ປະທານປະເທດ;
9. ວຽກປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
10. ວຽກການພົວພັນການຕ່າງປະເທດ;
11. ເນື້ອໃນການເຈລະຈາ, ສົນທິສັນຍາ ແລະ ສັນຍາກັບຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ;
12. ບັນຫາສັນຊາດ;
13. ວຽກໄພພິບັດ ທີ່ສົ່ງຜົນກະທົບຕໍ່ຊີວິດ ແລະ ຊັບສິນ;
14. ການນຳໃຊ້ມາດຕະການເພື່ອຄວບຄຸມພະຍາດຕິດຕໍ່ຂ້າມແດນ;
15. ວຽກອື່ນທີ່ສຳຄັນ ແລະ ຈຳເປັນ ທີ່ລັດຖະບານ ຫຼື ນາຍົກລັດຖະມົນຕີ ຊີ້ນຳ ຫຼື ສັ່ງການສະເພາະ.

**ມາດຕາ 10 ວຽກທີ່ ແຂວງ, ນະຄອນຫຼວງແກ້ໄຂເອງ ຢ່າງເປັນເຈົ້າການ**

ວຽກທີ່ ແຂວງ, ນະຄອນຫຼວງແກ້ໄຂເອງ ຢ່າງເປັນເຈົ້າການ ມີດັ່ງນີ້:

1. ວຽກກຳນົດໄວ້ໃນກົດໝາຍ ຫຼື ນິຕິກຳອື່ນ ທີ່ເປັນຄວາມຮັບຜິດຊອບສະເພາະຂອງແຂວງ, ນະຄອນຫຼວງ;
2. ວຽກກຳນົດໃນແຜນການລວມຂອງລັດຖະບານ, ແຂວງ, ນະຄອນຫຼວງ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ບໍ່ກ່ຽວຂ້ອງກັບແຂວງອື່ນ;
3. ວຽກທີ່ໄດ້ຮັບການຊີ້ນຳ, ຄຳສັ່ງ ຫຼື ມອບໝາຍສະເພາະ ຂອງລັດຖະບານ ຫຼື ນາຍົກລັດຖະມົນຕີ.

**ມາດຕາ 11 ວຽກທີ່ແຂວງ, ນະຄອນຫຼວງ ຕ້ອງປະສານງານກັນ**

ວຽກທີ່ແຂວງ, ນະຄອນຫຼວງ ຕ້ອງປະສານງານກັນ ເພື່ອເອກະພາບແລ້ວແກ້ໄຂ ມີດັ່ງນີ້:

1. ວຽກທີ່ກຳນົດໄວ້ໃນກົດໝາຍ ຫຼື ລະບຽບການ ທີ່ລະບຸໃຫ້ແຂວງ, ນະຄອນຫຼວງ ຕ້ອງປະສານງານເອກະພາບແລ້ວແກ້ໄຂ;
2. ວຽກການກຳນົດເຂດເຊື່ອມຕໍ່ລະຫວ່າງແຂວງ ກັບ ແຂວງ ກ່ອນສະເໜີລັດຖະບານ ພິຈາລະນາ;

3. ວຽກກ່ຽວກັບການຍົກຍ້າຍຖິ່ນຖານພູມລຳເນົາ ຂອງພົນລະເມືອງ ຈາກແຂວງຕົນ ຫາແຂວງອື່ນ;
4. ວຽກກ່ຽວກັບການຍົກຍ້າຍພະນັກງານ-ລັດຖະກອນ ຈາກແຂວງຕົນ ຫາແຂວງອື່ນ;
5. ວຽກປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ຢູ່ໃນຄວາມຮັບຜິດຊອບຂອງສອງແຂວງຂຶ້ນໄປ;
6. ໂຄງການກໍ່ສ້າງ ຫຼື ໂຄງການອື່ນໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງສອງແຂວງຂຶ້ນໄປ.

**ມາດຕາ 12 ວຽກທີ່ແຂວງ, ນະຄອນຫຼວງ ກັບ ກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງປະສານງານກັນ**

ວຽກທີ່ແຂວງ, ນະຄອນຫຼວງ ກັບ ກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງປະສານງານກັນ ມີດັ່ງນີ້:

1. ການສ້າງຕັ້ງພະແນກ, ອົງການລັດທຽບເທົ່າພະແນກ ແຂວງ, ນະຄອນຫຼວງ ກ່ອນນຳສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາ;
2. ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າພະແນກ ຫຼື ທຽບເທົ່າ ແຂວງ, ນະຄອນຫຼວງ ກ່ອນນຳສະເໜີສະພາປະຊາຊົນ ຂັ້ນແຂວງ ພິຈາລະນາ;
3. ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າຂະແໜງສາຍຕັ້ງ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ປະຈຳຢູ່ທ້ອງຖິ່ນ;
4. ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ການກຳນົດເຂດແດນເມືອງ, ເທດສະບານ, ນະຄອນ ກ່ອນສະເໜີລັດຖະບານ ພິຈາລະນາ;
5. ການຊີ້ນຳ, ຕິດຕາມ, ກວດກາການອອກແບບ, ການປະຕິບັດໂຄງການຊ່ວຍເຫຼືອ ແລະ ໂຄງການລົງທຶນ ທີ່ສູນກາງຄຸ້ມຄອງ; ການສົ່ງເສີມການລົງທຶນ ຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມຂະແໜງການ.

**ມາດຕາ 13 ວຽກທີ່ແຂວງ, ນະຄອນຫຼວງ ຕ້ອງສະເໜີຂໍຄຳເຫັນ ຂອງລັດຖະບານ ຫຼື ນາຍົກລັດຖະມົນຕີ**

ວຽກທີ່ແຂວງ, ນະຄອນຫຼວງ ຕ້ອງສະເໜີຂໍຄຳເຫັນ ຂອງລັດຖະບານ ຫຼື ນາຍົກລັດຖະມົນຕີ ໂດຍຜ່ານຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີດັ່ງນີ້:

1. ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ການກຳນົດເຂດແດນ ຂອງແຂວງ, ນະຄອນຫຼວງ;
2. ວຽກປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ທີ່ແຂວງ, ນະຄອນຫຼວງ ບໍ່ສາມາດແກ້ໄຂໄດ້;
3. ວຽກໄພພິບັດ ທີ່ສົ່ງຜົນກະທົບຕໍ່ ຊີວິດ ແລະ ຊັບສິນ;
4. ວຽກການຍົກຍ້າຍຖິ່ນຖານພູມລຳເນົາ ຂອງພົນລະເມືອງ ເປັນຈຳນວນຫຼວງຫຼາຍ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ລະບຽບການ;
5. ວຽກທີ່ມີຜົນກະທົບຕໍ່ສະຖຽນລະພາບດ້ານເສດຖະກິດ ຂອງແຂວງ, ນະຄອນຫຼວງ;
6. ບັນດານິຕິກຳ ຫຼື ລະບຽບການ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ວາງອອກ ທີ່ມີເນື້ອໃນບໍ່ສອດຄ່ອງກັບນະໂຍບາຍ, ກົດໝາຍ ຫຼື ນິຕິກຳ ຂອງລັດຖະບານ ຫຼື ນາຍົກລັດຖະມົນຕີ;
7. ວຽກທີ່ແຂວງ, ນະຄອນຫຼວງ ກັບ ແຂວງ, ນະຄອນຫຼວງ ຫຼື ແຂວງ, ນະຄອນຫຼວງກັບກະຊວງ, ອົງການລັດທຽບເທົ່າກະຊວງ ບໍ່ສາມາດເອກະພາບກັນໄດ້;
8. ວຽກທີ່ລັດຖະບານ ຫຼື ນາຍົກລັດຖະມົນຕີ ຊີ້ນຳ ຫຼື ສັ່ງການ ໃຫ້ລາຍງານ ຫຼື ນຳສະເໜີ ຫາສຳນັກງານນາຍົກລັດຖະມົນຕີ ສະເພາະ.

**ມາດຕາ 14 ການປະສານງານ ລະຫວ່າງກະຊວງ, ອົງການລັດທຽບເທົ່າກະຊວງ ດ້ວຍກັນ**

ລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ ຕ້ອງມີການປະສານງານ ຢ່າງເປັນປົກກະຕິ. ໃນເວລາຄົ້ນຄວ້າ, ພິຈາລະນາແກ້ໄຂວຽກງານ ຕາມຂອບເຂດສິດຂອງຕົນ ກໍລະນີມີບັນຫາກ່ຽວຂ້ອງກັບພາລະບົດບາດ, ໜ້າ

ທີ່ຂອງກະຊວງ, ອົງການລັດທຽບເທົ່າກະຊວງອື່ນ ຈະຕ້ອງນຳສະເໜີຂໍຄຳເຫັນຈາກລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງນັ້ນກ່ອນ ຢ່າງເປັນລາຍລັກອັກສອນ. ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ ເມື່ອໄດ້ຮັບເອກະສານສະເໜີແລ້ວ, ຕ້ອງມີຄຳເຫັນຕອບບັນຫາດັ່ງກ່າວຢ່າງເປັນລາຍລັກອັກສອນ ພາຍໃນ 10 ວັນທາງລັດຖະການ, ໃກ້ຈະຄົບກຳນົດເວລາ ຖ້າຫາກຍັງບໍ່ໄດ້ຮັບຄຳຕອບ ກະຊວງ, ອົງການລັດທຽບເທົ່າກະຊວງທີ່ສະເໜີນັ້ນ ຕ້ອງປະສານງານທວງຖາມຕື່ມ. ເມື່ອຄົບກຳນົດ 10 ວັນ ທາງລັດຖະການ ຖ້າຫາກບໍ່ມີຄຳຕອບ ຖືວ່າເຫັນດີຕາມການສະເໜີ ແລະ ຕ້ອງຮັບຜິດຊອບ ຕໍ່ບັນຫາດັ່ງກ່າວ.

ໜັງສືແຈ້ງຕອບຕ້ອງແມ່ນລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ ຫຼື ຮອງລັດຖະມົນຕີ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ ຜູ້ໄດ້ຮັບມອບໝາຍເປັນຜູ້ລົງລາຍເຊັນ.

**ມາດຕາ 15 ການປະສານງານ ລະຫວ່າງກະຊວງ, ອົງການລັດທຽບເທົ່າກະຊວງ ກັບສຳນັກງານນາຍົກລັດຖະມົນຕີ**

ກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງມີການປະສານງານ ກັບສຳນັກງານນາຍົກລັດຖະມົນຕີ ຢ່າງເປັນປົກກະຕິ ໂດຍຜ່ານຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອສະເໜີ ແລະ ຕິດຕາມວຽກທີ່ຕົນສະເໜີຂໍທິດຊີ້ນຳຈາກລັດຖະບານ ຫຼື ນາຍົກລັດຖະມົນຕີ ຕາມທີ່ກຳນົດ ໃນມາດຕາ 9 ຂອງດຳລັດສະບັບນີ້.

ການສະເໜີ ຫຼື ການລາຍງານ ຕໍ່ສຳນັກງານນາຍົກລັດຖະມົນຕີ ຕ້ອງແມ່ນລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ຫຼື ຮອງລັດຖະມົນຕີ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ ຜູ້ໄດ້ຮັບມອບໝາຍເປັນຜູ້ສະເໜີ ຫຼື ລາຍງານແທນ. ບົດສະເໜີ ຫຼື ບົດລາຍງານ ຕ້ອງແມ່ນລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ຫຼື ຮອງລັດຖະມົນຕີ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ ຜູ້ໄດ້ຮັບມອບໝາຍ ເປັນຜູ້ລົງລາຍເຊັນ.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ປະສານງານກັບກະຊວງ, ອົງການລັດທຽບເທົ່າກະຊວງ ເພື່ອແລກປ່ຽນຂໍ້ມູນຂ່າວສານ, ຊຸກຍູ້, ຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດແຜນງານ, ແຜນການ, ໂຄງການ ແລະ ນິຕິກຳຂອງລັດຖະບານ ແລະ ນາຍົກລັດຖະມົນຕີ ທີ່ປະກາດໃຊ້ແລ້ວ ໃຫ້ໄດ້ຮັບຜົນສຳເລັດ ຕາມລະດັບຄາດໝາຍ.

**ມາດຕາ 16 ການປະສານງານ ລະຫວ່າງແຂວງ, ນະຄອນຫຼວງ ກັບ ແຂວງ, ນະຄອນຫຼວງດ້ວຍກັນ**

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕ້ອງມີການປະສານງານ ຢ່າງເປັນປົກກະຕິ. ໃນເວລາຄົ້ນຄວ້າ, ພິຈາລະນາແກ້ໄຂວຽກງານ ຕາມຂອບເຂດສິດຂອງຕົນ ກໍລະນີບັນຫາກ່ຽວຂ້ອງກັບພາລະບົດບາດ, ໜ້າທີ່ຂອງແຂວງອື່ນ ຈະຕ້ອງນຳສະເໜີຂໍຄຳເຫັນຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ນັ້ນກ່ອນ ຢ່າງເປັນລາຍລັກອັກສອນ. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ກ່ຽວຂ້ອງ ເມື່ອໄດ້ຮັບເອກະສານສະເໜີແລ້ວ, ຕ້ອງມີຄຳເຫັນຕອບບັນຫາດັ່ງກ່າວ ຢ່າງເປັນລາຍລັກອັກສອນ ພາຍໃນ 10 ວັນ ທາງລັດຖະການ, ໃກ້ຈະຄົບກຳນົດເວລາ ຖ້າຫາກຍັງບໍ່ໄດ້ຮັບຄຳຕອບ ແຂວງ, ນະຄອນຫຼວງທີ່ສະເໜີນັ້ນ ຕ້ອງປະສານງານທວງຖາມຕື່ມ. ເມື່ອຄົບກຳນົດ 10 ວັນ ທາງລັດຖະການ ຖ້າຫາກບໍ່ມີຄຳຕອບ ຖືວ່າເຫັນດີຕາມການສະເໜີ ແລະ ຕ້ອງຮັບຜິດຊອບຕໍ່ບັນຫາດັ່ງກ່າວ.

ໜັງສືແຈ້ງຕອບ ຕ້ອງແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຜູ້ໄດ້ຮັບມອບໝາຍ ເປັນຜູ້ລົງລາຍເຊັນ.

**ມາດຕາ 17 ການປະສານງານ ລະຫວ່າງແຂວງ, ນະຄອນຫຼວງ ກັບກະຊວງ, ອົງການລັດທຽບເທົ່າກະຊວງ**

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ ຕ້ອງມີການປະສານງານຢ່າງເປັນປົກກະຕິ. ໃນເວລາຄົ້ນຄວ້າ, ພິຈາລະນາແກ້ໄຂວຽກງານ ຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນ ກໍລະນີບັນຫາກ່ຽວຂ້ອງກັບພາລະບົດບາດ, ໜ້າທີ່ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ຫຼື ແຂວງ, ນະຄອນຫຼວງ ຈະຕ້ອງນຳສະເໜີຂໍຄຳເຫັນຈາກລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ກ່ຽວຂ້ອງກ່ອນ ຢ່າງເປັນລາຍລັກອັກສອນ. ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ

ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ກ່ຽວຂ້ອງ ເມື່ອໄດ້ຮັບເອກະສານສະເໜີແລ້ວ ຕ້ອງມີຄຳເຫັນຕອບຢ່າງເປັນລາຍລັກອັກສອນ ພາຍໃນ 10 ວັນ ທາງລັດຖະການ, ໃກ້ຈະຄົບກຳນົດເວລາ ຖ້າຫາກຍັງບໍ່ໄດ້ຮັບຄຳຕອບ ແຂວງ, ນະຄອນຫຼວງ, ກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ສະເໜີນັ້ນ ຕ້ອງປະສານງານທວງຖາມຕື່ມ. ເມື່ອຄົບກຳນົດ 10 ວັນ ທາງລັດຖະການ ຖ້າຫາກບໍ່ມີຄຳຕອບ ຖືວ່າເຫັນດີຕາມການສະເໜີ ແລະ ຕ້ອງຮັບຜິດຊອບຕໍ່ບັນຫາດັ່ງກ່າວ.

ໜັງສືແຈ້ງຕອບ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງແມ່ນລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ ຫຼື ຮອງລັດຖະມົນຕີ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ ຜູ້ທີ່ໄດ້ຮັບການມອບໝາຍ ເປັນຜູ້ລົງລາຍເຊັນ.

ໜັງສືແຈ້ງຕອບ ຂອງແຂວງ, ນະຄອນຫຼວງ ຕ້ອງແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ລົງລາຍເຊັນ.

**ມາດຕາ 18 ການປະສານງານ ລະຫວ່າງແຂວງ, ນະຄອນຫຼວງ ກັບສຳນັກງານນາຍົກລັດຖະມົນຕີ**

ແຂວງ, ນະຄອນຫຼວງ ຕ້ອງມີການປະສານງານ ກັບສຳນັກງານນາຍົກລັດຖະມົນຕີ ຢ່າງເປັນປົກກະຕິ ໂດຍຜ່ານຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອສະເໜີ ແລະ ຕິດຕາມວຽກທີ່ຕົນສະເໜີຂໍທິດຊີ້ນຳຈາກລັດຖະບານ ຫຼື ນາຍົກລັດຖະມົນຕີ ຕາມທີ່ກຳນົດ ໃນມາດຕາ 13 ຂອງດຳລັດສະບັບນີ້.

ການສະເໜີ ຫຼື ການລາຍງານ ຕໍ່ສຳນັກງານນາຍົກລັດຖະມົນຕີ ຕ້ອງແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຜູ້ໄດ້ຮັບມອບໝາຍ ເປັນຜູ້ສະເໜີ ຫຼື ລາຍງານແທນ. ບົດສະເໜີ ຫຼື ບົດລາຍງານ ຕ້ອງແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຜູ້ໄດ້ຮັບມອບໝາຍ ເປັນຜູ້ລົງລາຍເຊັນ.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ປະສານງານກັບແຂວງ, ນະຄອນຫຼວງ ເພື່ອແລກປ່ຽນຂໍ້ມູນຂ່າວສານ, ຊຸກຍູ້, ຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດແຜນງານ, ແຜນການ, ໂຄງການ ແລະ ນິຕິກຳຂອງລັດຖະບານ ແລະ ນາຍົກລັດຖະມົນຕີ ທີ່ປະກາດໃຊ້ແລ້ວ ໃຫ້ໄດ້ຮັບຜົນສຳເລັດ ຕາມລະດັບຄາດໝາຍ.

## ໝວດທີ 3
## ການສົ່ງເອກະສານ ແລະ ພິຈາລະນາ
## ເອກະສານຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

**ມາດຕາ 19 ເອກະສານ ທີ່ສົ່ງຫາຫ້ອງວ່າການສຳນັກງານຍົກລັດຖະມົນຕີ**

ເອກະສານ ທີ່ສົ່ງຫາຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແມ່ນເອກະສານກ່ຽວກັບວຽກທີ່ກຳນົດໄວ້ ໃນມາດຕາ 9 ແລະ ມາດຕາ 13 ຂອງດຳລັດສະບັບນີ້ ແລະ ຕາມກົດໝາຍວ່າດ້ວຍລັດຖະບານ ກຳນົດ ເພື່ອສະເໜີ ຫຼື ລາຍງານຫາລັດຖະບານ ຫຼື ນາຍົກລັດຖະມົນຕີ ພິຈາລະນາ. ເອກະສານດັ່ງກ່າວ ຕ້ອງມີເນື້ອໃນຈະແຈ້ງ, ຮັດກຸມ, ກະທັດຮັດ ແລະ ຄົບຖ້ວນ ຫຼື ຖ້າແມ່ນເອກະສານເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວກ່ອນ ຈຶ່ງສົ່ງໄປຫາຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

**ມາດຕາ 20 ການສົ່ງເອກະສານ ເພື່ອພິຈາລະນາໃນກອງປະຊຸມລັດຖະບານ**

ການສົ່ງເອກະສານ ເພື່ອພິຈາລະນາໃນກອງປະຊຸມລັດຖະບານ ນັ້ນ ເຈົ້າຂອງເອກະສານ ຕ້ອງສົ່ງໄປໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໃນເວລາອັນຄວນ. ຖ້າຫາກເລື່ອງດັ່ງກ່າວ ມີກຳນົດປະຕິບັດທີ່ແນ່ນອນ ກໍ່ຕ້ອງສົ່ງໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ອນມື້ປະຊຸມ 07 ວັນ. ຖ້າເປັນເລື່ອງກະທັນຫັນ ແລະ ຮີບດ່ວນ ກໍ່ບໍ່ຄວນຫຼຸດ 01-02 ວັນ ກ່ອນມື້ປະຊຸມ. ຍົກເວັ້ນແຕ່ນາຍົກລັດຖະມົນຕີ ຈະສັ່ງການເປັນພິເສດກ່ຽວກັບບັນຫານັ້ນ.

**ມາດຕາ 21 ການພິຈາລະນາເອກະສານ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ເມື່ອຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໄດ້ຮັບເອກະສານແລ້ວ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຈະຕ້ອງໄດ້ກວດກາຄວາມຖືກຕ້ອງ, ຖ້າເຫັນວ່າເອກະສານສະເໜີມານັ້ນ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຫາກບໍ່ແມ່ນຂອບເຂດຄວາມຮັບຜິດຊອບຂອງລັດຖະບານ ຫຼື ບໍ່ແມ່ນຄວາມຮັບຜິດຊອບຂອງນາຍົກລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີສິດສົ່ງເລື່ອງນັ້ນກັບຄືນໃຫ້ເຈົ້າຂອງເອກະສານ ພາຍໃນ 10 ວັນ ທາງລັດຖະການ. ໃນກໍລະນີລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເຈົ້າຂອງເອກະສານບໍ່ເຫັນດີຕາມຄຳເຫັນ ຂອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ກ່ຽວຂ້ອງ ກໍ່ສາມາດສະເໜີຫາ ນາຍົກລັດຖະມົນຕີໂດຍກົງ ແຕ່ຕ້ອງຄັດຕິດຄຳເຫັນ ຂອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໄປພ້ອມ.

ຖ້າບັນຫາທີ່ສະເໜີມານັ້ນ ມີເຫດຜົນພຽງພໍ, ມີເອກະສານຄົບຖ້ວນ ແລະ ເປັນສິດຂອງນາຍົກລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຕ້ອງໄດ້ສັງລວມ ແລະ ສະຫຼຸບຫຍໍ້ ໃຫ້ນາຍົກລັດຖະມົນຕີ ເພື່ອພິຈາລະນາ. ແຕ່ຖ້າວຽກງານດັ່ງກ່າວນັ້ນ ເປັນຄວາມຮັບຜິດຊອບ ຂອງລັດຖະບານ ໃຫ້ນຳເຂົ້າກອງປະຊຸມລັດຖະບານເພື່ອພິຈາລະນາ.

**ມາດຕາ 22 ການພິຈາລະນາ ໃນກອງປະຊຸມລັດຖະບານ**

ການພິຈາລະນາ ໃນກອງປະຊຸມລັດຖະບານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ຕ້ອງເປັນເຈົ້າການສະເໜີ, ອະທິບາຍເນື້ອໃນ ແລະ ເຫດຜົນຂອງບັນຫາໃຫ້ຈະແຈ້ງ ເພື່ອສະໜອງຂໍ້ມູນທີ່ຊັດເຈນ ກ່ຽວກັບຄວາມເປັນມາຂອງບັນຫາ, ຄວາມຈຳເປັນທີ່ໄດ້ສະເໜີ ແລະ ຊີ້ໃຫ້ເຫັນອຸປະສັກ ແລະ ທ່າອ່ຽງຂອງບັນຫາ ພ້ອມທັງມີວິທີແກ້ໄຂໄວ້ ຢ່າງໜ້ອຍ 2-3 ວິທີ ເພື່ອໃຫ້ກອງປະຊຸມ ມີທາງເລືອກຕົກລົງ, ຖ້າຈຳເປັນ ລັດຖະມົນຕີ ອາດຂໍອະນຸຍາດເອົາຜູ້ຊ່ຽວຊານ ຫຼື ພະນັກງານວິຊາການ ເຂົ້າອະທິບາຍຊ່ວຍກໍໄດ້.

## ໝວດທີ 4

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການປົກປ້ອງ, ຍ້ອງຍໍ, ຊົມເຊີຍ ຫຼື ໄດ້ຮັບນະໂຍບາຍອື່ນ ຕາມແຕ່ລະກໍລະນີ.

**ມາດຕາ 24 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະໄດ້ຮັບການສຶກສາອົບຮົມ, ຕິຕຽນ, ໂຈະການຍ້ອງຍໍ, ຊົມເຊີຍ ຫຼື ໄດ້ຮັບນະໂຍບາຍອື່ນ ຕາມແຕ່ລະກໍລະນີ.

## ໝວດທີ5

## ບົດບັນຍັດສຸດທ້າຍ

**ມາດຕາ 25 ການຜັນຂະຫຍາຍ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນເຈົ້າການໃນການເຜີຍແຜ່, ແນະນຳບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຕ້ອງຜັນຂະຫຍາຍເນື້ອໃນດຳລັດສະບັບນີ້ ໃຫ້ລະອຽດ ແລະ ແທດເໝາະກັບຂະແໜງການ, ທ້ອງຖິ່ນຕົນ.

ມາດຕາ 26 ການຈັດຕັ້ງປະຕິບັດ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.

ມາດຕາ 27 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດ ທາງລັດຖະການສິບຫ້າວັນ ເປັນຕົ້ນໄປ ແລະ ປ່ຽນແທນ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 220/ນຍ, ລົງວັນທີ 19 ພະຈິກ 1998.

ລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ